**ມິຊຊາອາທິດທີ 17 ການົດທຳມະດາປີ C**

**ວັນທີ 28 ກໍລະກົດ 2019**



**ພຣະວໍລະສານໂດຍນັກບຸນລູກາ 11, 1-13**

ມື້ໜຶ່ງ, ພຣະເຢຊູເຈົ້າກຳລັງສວດພາວະນາ. ເມື່ອສວດພາວະນາແລ້ວ ກໍມີສາວົກຜູ້ໜຶ່ງມາທູນພຣະອົງວ່າ: ພຣະອາຈານເອີຍ, ໂຜດສອນພວກຂ້ານ້ອຍສວດຄືທ່ານຢວງບັບຕິສຕາໄດ້ສອນລູກສິດຂອງເພິ່ນນັ້ນເທີ້ນ. ພຣະອົງຕອບວ່າ: ເມື່ອພວກເຈົ້າສວດພາວະນາໃຫ້ວ່າດັ່ງນີ້: ໂອພຣະບິດາເຈົ້າ, ຂໍໃຫ້ພຣະນາມຮຸ່ງເຮືອງໄປ. ເມືອງພຣະອົງໃຫ້ມາເຖິງ. ອາຫານປະຈຳວັນຂໍທານໃຫ້ໃນວັນນີ້. ຂໍໂຜດບາບໃຫ້ພວກຂ້າພະເຈົ້າ ຍ້ອນພວກຂ້າພະເຈົ້າໄດ້ໃຫ້ອະໄພແກ່ຜູ້ທີ່ທຳຜິດຕໍ່ພວກຂ້າພະເຈົ້າ. ຂໍຢ່າປະພວກຂ້າພະເຈົ້າໃນຍາມຖືກຫລອກລວງ.

ແລ້ວພຣະອົງກ່າວອີກວ່າ: ຖ້າຫາກຜູ້ໜຶ່ງໃນພວກເຈົ້າມີສ່ຽວຜູ້ໜຶ່ງມາຫາໃນຍາມເດິກທ່ຽງຄືນແລະເວົ້າວ່າ: ສ່ຽວເອີຍ, ເຮົາຂໍຢືມເຂົ້າຈີ່ຈັກສາມກ້ອນແດ່ ຍ້ອນວ່າສ່ຽວເຮົາຜູ້ໜຶ່ງມາແຕ່ທາງໄກແລະເຮົາບໍ່ມີຫຍັງໃຫ້ເຂົາກິນ. ຖ້າສ່ຽວຜູ້ຢູ່ໃນເຮືອນຕອບວ່າ: ຢ່າມາກວນ, ປະຕູອັດໝົດແລ້ວ, ລູກເຕົ້າແລະເຮົາເຂົ້ານອນໝົດແລ້ວ. ເຮົາລຸກໄປເອົາເຂົ້າຈີ່ມາໃຫ້ໂຕບໍ່ໄດ້.

ເຮົາບອກພວກເຈົ້າວ່າ: ແມ່ນເຂົາບໍ່ລຸກຂຶ້ນໄປເອົາເຂົ້າຈີ່ມາໃຫ້ໃນຖານເປັນສ່ຽວກັນກໍຕາມ, ແຕ່ເຂົາຈະລຸກຂຶ້ນຍ້ອນສ່ຽວຜູ້ນັ້ນມາລົບກວນແລະຈະຫາເອົາທຸກສິ່ງທີ່ຕ້ອງການນັ້ນມາໃຫ້. ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: ຈົ່ງຂໍແລະຈະໄດ້. ຈົ່ງຫາແລະຈະພົ້. ຈົ່ງເຄາະປະຕູແລະເຂົາຈະໄຂເອົາ. ຍ້ອນວ່າຜູ້ໃດຂໍ ກໍໄດ້ຮັບ. ຜູ້ໃດຊອກຫາ ກໍພົບເຫັນ. ແລະຜູ້ໃດເຄາະປະຕູ ກໍຈະໄຂຮັບເອົາ.

ມີຜູ້ເປັນພໍ່ຄົນໃດໃນພວກເຈົ້າ ເມື່ອເຫັນລູກມາຂໍເຂົ້າຈີ່ຈະເອົາກ້ອນຫີນໃຫ້ຕາງ. ແລະເມື່ອລູກມາຂໍປາຈະເອົາງູໃຫ້ບໍ? ຫລືຖ້າລູກຂໍໄຂ່ຈະເອົາແມງງອດໃຫ້ບໍ? ດັ່ງນີ້, ຖ້າວ່າພວກເຈົ້າຜູ້ເປັນຄົນຊົ່ວຍັງຮູ້ຈັກຫາແນວດີມາໃຫ້ລູກແລ້ວ, ພຣະບິດາເຈົ້າສະຫວັນແຮງຈະປະທານພຣະຈິດເຈົ້າແກ່ຜູ້ທີ່ວອນຂໍພຣະອົງນັ້ນກວ່າອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 11, 1-13**

ແມ່ນຊີວິດພາວະນາສະໜິດສຳພັນຂອງພຣະເຢຊູເຈົ້າກັບພຣະບິດາທີ່ທຳໃຫ້ລູກສິດຂອງທ່ານຢວງບັບຕິສຕາໄດ້ຖືກດຶງດູດແລະມີຄວາມສົນໃຈ. ດັ່ງນັ້ນເຂົາຈຶ່ງວອນຂໍພຣະເຢຊູເຈົ້າສອນເຂົາໃຫ້ຮູ້ຈັກພາວະນາເໝືອນກັບທ່ານຢວງໄດ້ສອນລູກສິດຂອງເຂົາ. ໃນທີ່ນີ້, ຜູ້ຂຽນພຣະວໍລະສານບໍ່ໄດ້ບັນລະຍາຍໃຫ້ພວກເຮົາຮູ້ຈັກເຖິງເນື້ອຫາຄຳພາວະນາຂອງທ່ານຢວງທີ່ໄດ້ສອນພວກລູກສິດຂອງທ່ານ. ມີສິ່ງໜຶ່ງທີ່ພວກເຮົາຮູ້ຈັກຄືຄຳຕອບຂອງພຣະເຢຊູເຈົ້າຕໍ່ລູກສິດຂອງທ່ານຢວງ, ແຕ່ຄຳຕອບຂອງພຣະເຢຊູເຈົ້າເບິ່ງຄືບໍ່ຕົງກັບຄຳຖາມຂອງລູກສິດຜູ້ນີ້. ແທນທີ່ພຣະເຢຊູເຈົ້າຈະຕອບເຂົາວ່າ ເມື່ອເວລາເຈົ້າສວດພາວະນາໃຫ້ເຈົ້າສວດບົດນີ້, ບົດນັ້ນ... ແຕ່ພຣະເຢຊູເຈົ້າກ່າວວ່າ: ເມື່ອເຈົ້າສວດພາວະນາໃຫ້ເຈົ້າເວົ້າວ່າ: ໂອພຣະບິດາເຈົ້າ, ຂໍໃຫ້ພຣະນາມຮຸ່ງເຮືອງໄປ. ເມືອງພຣະອົງໃຫ້ມາເຖິງ. ໝາຍຄວາມວ່າຢ່າງໃດ? ໝາຍຄວາມວ່າ ພຣະເຢຊູເຈົ້າຢາກໃຫ້ລູກສິດຂອງທ່ານຢວງເຂົ້າຮ່ວມໃນຄວາມຮັກຜູກພັນລະຫວ່າງລູກກັບພໍ່ທຸກຄັ້ງເມື່ອເຂົາສວດພາວະນາ, ເໝືອນກັບພຣະອົງເອງທີ່ເປັນໜຶ່ງດຽວກັບພຣະບິດາ. ແລະເມື່ອພວກເຮົາສຳພັດໄດ້ເຖິງຄວາມຮັກຂອງພຣະບິດາທີ່ມີຕໍ່ພວກເຮົາແລ້ວ, ແນ່ນອນທຸກສິ່ງທີ່ພວກເຮົາວອນຂໍນຳພຣະອົງພວກເຮົາກໍຈະໄດ້ຮັບ. ເພາະບໍ່ມີພໍ່ຄົນໃດເມື່ອລູກຂໍເຂົ້າຈີ່ຈະເອົາກ້ອນຫີນໃຫ້, ເມື່ອລູກຂໍປາຈະເອົາງູໃຫ້ແລະເມື່ອລູກຂໍໄຂ່ຈະເອົາແມງງອດໃຫ້. ໝາຍຄວາມວ່າຜູ້ເປັນພໍ່ບໍ່ພຽງແຕ່ໃຫ້ຕາມສິ່ງທີ່ລູກຂອງຕົນວອນຂໍເທົ່ານັ້ນ, ແຕ່ເພິ່ນຍັງຮູ້ຈັກສິ່ງໃດເປັນສິ່ງຈຳເປັນແລະດີສຳລັບລູກຂອງຕົນ. ຍິ່ງໄປກວ່ານັ້ນ, ພຣະບິດາເຈົ້າສະຫວັນຈະປະທານໃຫ້ພວກເຮົາສິ່ງທີ່ດີທີ່ສຸດອັນແມ່ນອົງພຣະຈິດເຈົ້າໃຫ້ຜູ້ທີ່ວອນຂໍພຣະອົງ. ຍ້ອນອົງພຣະຈິດເຈົ້າຈະສອນພວກເຮົາໃຫ້ຮູ້ຈັກວອນຂໍສິ່ງທີ່ຊອບພຣະໄທພຣະເຈົ້າ, ສິ່ງທີ່ດີແລະຈຳເປັນສຳລັບຊີວິດຝ່າຍກາຍກໍຄືຊີວິດຝ່າຍຈິດຂອງພວກເຮົາ.

ຫລາຍຄັ້ງພວກເຮົາບໍ່ຮູ້ຈັກສວດພາວະນາ, ບໍ່ຮູ້ຈັກວອນຂໍພຣະຄຸນຈຳເປັນສຳລັບຕົວເອງແລະຜູ້ອື່ນ. ແລະເມື່ອພວກເຮົາພາວະນາບໍ່ແມ່ນພວກເຮົາເຂົ້າສູ່ຄວາມສຳພັນແຫ່ງຮັກລະຫວ່າງລູກກັບພໍ່, ແຕ່ພວກເຮົາຄິດຫາແຕ່ສິ່ງທີ່ພວກເຮົາຢາກໄດ້, ວອນຂໍສິ່ງທີ່ສະໜອງຄວາມຕ້ອງການຂອງພວກເຮົາຢູ່ໃນໂລກນີ້. ເພາະສະນັ້ນ, ຫລາຍຄັ້ງພວກເຮົາມີຄວາມຮູ້ສຶກວ່າພຣະເຈົ້າບໍ່ສະດັບຟັງຄຳພາວະນາຂອງພວກເຮົາ, ພຣະອົງບໍ່ປະທານໃຫ້ຕາມສິ່ງທີ່ພວກເຮົາວອນຂໍ. ສິ່ງທີ່ຕາມມາກໍຄືທຳໃຫ້ພວກເຮົາຂາດຄວາມເຊື່ອແລະຄວາມໄວ້ໃຈໃນພຣະອົງ.

ວັນນີ້, ພຣະເຢຊູເຈົ້າສອນພວກເຮົາວ່າໃນການພາວະນາ, ກ່ອນອື່ນໝົດແມ່ນພວກເຮົາຮັບຮູ້ວ່າພວກເຮົາມີພໍ່ຜູ້ທີ່ຮັກແພງພວກເຮົາຢູ່ສະຫວັນ. ແລະສິ່ງທີ່ພວກເຮົາຕ້ອງກະທຳຄືໃຫ້ທຸກຄົນໄດ້ຮູ້ຈັກແລະຮັກພໍ່ຜູ້ນີ້. ດັ່ງທີ່ພຣະເຢຊູເຈົ້າສອນວ່າ: ຂໍໃຫ້ພຣະນາມຮຸ່ງເຮືອງໄປ. ແລະໃຫ້ທຸກຄົນໄດ້ຮູ້ຈັກວາຈາຂອງພໍ່ຜູ້ນີ້ແລະທຳໃຫ້ວາຈານັ້ນເກີດຜົນໃນຊີວິດຂອງຕົນ. ດັ່ງທີ່ພຣະເຢຊູເຈົ້າກ່າວວ່າ: ເມືອງພຣະອົງໃຫ້ມາເຖິງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ